# ຜົນກະທົບຂອງການບໍລິໂພກເຄື່ອງດື່ມ ທີ່ ມີທາດເຫຼົ້າໃນໄລຍະຖືພາ



## ສ່ຽງຕໍ່ການລຸລູກ

ແມ່ຍິງຖືພາ ຫາກດື່ມທາດເຫຼົ້າ ຕັ້ງແຕ່ 2-3 ເດືອນທຳອິດ ຂອງການຖືພາ ອາດຈະມີພາວະສ່ຽງຕໍ່ການລຸລູກ ຕັ້ງແຕ່ກ່ອນອາຍຸຖືພາ 20 ອາທິດ

## ສ່ຽງເດັກ**ຕາຍ**ໃນທ້ອງ

ໄລຍະທ້າຍໄຕມາດ **2-3** ຂອງການຖືພາ ຫາກແມ່ຍັງດື່ມທາດເຫຼົ້າອາດຈະເກີດພາວະສ່ຽງ **ລູກຕາຍ** ໃນທ້ອງໄດ້

## ເດັກເກີດກ່ອນກຳນົດ

ການດື່ມທາດເຫຼົ້າ ແມ່ນເພີ່ມມີໂອກາດ ເດັກເກີດກ່ອນກຳນົດ ເຊິ່ງອາດ ເຮັດໃຫ້ມີບັນຫາສຸຂະພາບຕາມມາຫຼາຍຢ່າງເຊັ່ນ: ການຫາຍໃຈ, ເລື່ອງຄວາມ ສົມບູນຂອງປອດ ແລະ ອື່ນໆ

## ບັນຫາສຸຂະພາບເດັກ

ເດັກອາດພົບບັນຫາກ່ຽວກັບ ຫົວໃຈ ຫຼື ໄຂ່ຫຼັງ, ນອກຈາກນີ້ ອາດສົ່ງຜົນກະທົບຕໍ່ການເບິ່ງເຫັນ ແລະ ການໄດ້ຍິນອີກດ້ວຍ

## ພາວະອາການຜິດປົກກະຕິ

1. ທາງດ້ານສະໝອງ: ສະໝອງພິການ
2. ຮ່າງກາຍ: ຮ່າງກາຍຜິດປົກກະຕິ ຫຼື ພິການ
3. ພຶດຕິກຳ: ຄວາມຈື່ຈຳບໍ່ໄດ້ດີ, ສະມາທິສັ້ນ
4. ນ້ຳໜັກເດັກຕ່ຳກວ່າປົກກະຕິ
5. ເນື້ອສະໝອງລີບ, ຮູບໜ້າເດັກຜິດປົກກະຕິ
6. ບໍ່ມີຮ່ອງດັງ, ຮີມສົບບາງ ແລະ ຫົວໃຈຜິດປົກກະຕິ

ຕິດຕໍ່: 021 413 261
FB: PFHA - Promotion of Family Health Association

ສະໜັບສະໜູນໂດຍ:
IOGT·NTO MOVEMENT
ສະມາຄົມສົ່ງເສີມສຸຂະພາບຄອບຄົວ (PFHA)